


ເມື່ອພະລາຊາໄດ້ຟັງສິ່ງທີ່ເກີດຂຶ້ນ ກໍແຄ້ນຫຼາຍ.

ທ່ານຈຶ່ງເອີ້ນທາດເຈົ້າໜີ້ນັ້ນມາເວົ້າວ່າ, "ໄອ້ຊົ່ວຮ້າຍ ເຮົາຍົກໜີ້ໃຫ້ມຶງໝົດ ກໍເພາະມຶງອ້ອນວອນເຮົາ ມຶງຄວນຈະເມດຕາ. ເພື່ອນທາດດ້ວຍກັນຄືເຮົາເມດຕາໃຫ້ມຶງບໍ່ແມ່ນບໍ?"



ແລ້ວພະລາຊາກໍສັ່ງທາດນັ້ນໄປລົງໂທດໃນຄຸກຈົນກ່ວາຈະໃຊ້ໜີ້ໝົດ.



ສຸດທ້າຍ ພຣະເຢຊູ ເວົ້າກັບຝູງຊົນວ່າ, "ຖ້າພວກທ່ານບໍ່ຍອມຍົກໂທດໃຫ້ຄົນອື່ນ ພໍ່ຂອງເຮົາຜູ້ສະຖິດໃນສະຫວັນ ກໍຈະບໍ່ຍົກໂທດໃຫ້ເຮົາເຊັ່ນກັນ."



ຊື່ ____________

# ຜູ້ທີ່ບໍ່ຍອມໃຫ້ອະໄພ




ວັນໜຶ່ງ ເປໂຕ ທູດຖາມ ພຣະເຢຊູວ່າ, "ທ່ານອາຈານ ຂ້ານ້ອຍຄວນຍົກໂທດໃຫ້ຄົນທີ່ເຮັດຜິດຕໍ່ຂ້ານ້ອຍຈັກຄັ້ງ? 7 ຄັ້ງພໍບໍ?"

ພຣະເຢຊູ ຕອບວ່າ, "ບໍ່ແມ່ນ 7 ຄັ້ງ ແຕ່ 77 ຄັ້ງ." ຕ່າງຫາກຈາກນັ້ນ ພຣະອົງກໍໄດ້ເລົ່າເລື່ອງໜຶ່ງ.



ວັນໜຶ່ງພະລາຊາອົງໜຶ່ງ ຄິດບັນຊີກັບບັນດາທາດຂອງຕົນ. ທາດຄົນໜຶ່ງເປັນໜີ້ 50 ລ້ານຫຼຽນ.



ທາດຄົນນັ້ນ ບໍ່ມີເງິນທີ່ຈະໃຊ້ໜີ້ໄດ້. ດັ່ງນັ້ນພະລາຊາຈຶ່ງອອກຄຳສັ່ງໃຫ້ຂາຍຕົວລາວ ພ້ອມກັບພັນລະຍາ ແລະ ລູກ ລວມທັງບັນດາສິ່ງຂອງທີ່ລາວມີຢູ່ນັ້ນ ເພື່ອເອົາມາໃຊ້ໜີ້.



ທາດຄົນນັ້ນຈຶ່ງຄຸເຂົ່າລົງຂໍຄວາມເມດຕາ. ພະລາຊາຮູ້ສຶກສົງສານ ຈຶ່ງປ່ອຍຕົວລາວແລະຍົກໜີ້ໃຫ້.



ເມື່ອທາດຄົນນັ້ນອອກໄປ ກໍພົບທາດຄົນໜຶ່ງທີ່ເປັນເພື່ອນທາດດ້ວຍກັນ ເຊິ່ງເປັນໜີ້ລາວຢູ່ 100 ຫຼຽນ.



ລາວກໍຈັບບີບຄໍຊາຍຄົນນັ້ນ ແລະບອກວ່າ, "ມຶງຕ້ອງໃຊ້ໜີ້ໃຫ້ກູ".





ເພື່ອນທາດຄົນນັ້ນ ຈຶ່ງຄຸເຂົ່າລົງ ແລະ ອ້ອນວອນລາວວ່າ, "ໂປດເມດຕາຂ້ອຍເຖີດ ຂ້ອຍຈະໃຊ້ໜີ້ໃຫ້ພາຍຫຼັງ".



ແຕ່ທາດເຈົ້າໜີ້ບໍ່ຍອມເມດຕາຈຶ່ງນໍາທາດລູກໜີ້ນັ້ນໄປຂັງຄຸກໄວ້ຈົນກວ່າຈະໃຊ້ໜີ້ໝົດ.



ເມື່ອທາດຄົນອື່ນເຫັນເຫດການທີ່ເກີດຂຶ້ນ ກໍນໍາເຫດການທັງໝົດໄປກາບທູນພະລາຊາ.